**ມິຊຊາອາທິດທີ 5 ການົດທຳມະດາ**

**ວັນທີ 6 ກຸມພາ 2022**



**ພຣະວໍລະສານໂດຍນັກບຸນລູກາ 5, 1-11**

ໃນເວລານັ້ນມີມະຫາຊົນຫລັ່ງໄຫລມາຟັງໂອວາດຂອງພຣະເຈົ້າ ແລະພຣະເຢຊູເຈົ້າເອງກໍປະທັບຢືນຝັ່ງທະເລເຢເນຊາແລັດ. ພຣະອົງທອດພຣະເນດເຫັນເຮືອສອງລຳຈອດຢູ່ຮີມຝັ່ງ, ສ່ວນຊາວປະມົງນັ້ນຂຶ້ນຈາກເຮືອໄປລ້າງມອງ. ພຣະອົງຈຶ່ງສະເດັດລົງໃນເຮືອລຳໜຶ່ງ ອັນແມ່ນຂອງຊີມອນ. ພຣະອົງສັ່ງບອກໃຫ້ພາຍອອກໄກຝັ່ງໜ້ອຍໜຶ່ງ. ແລ້ວພຣະອົງກໍຊົງນັ່ງເທດສະໜາສັ່ງສອນ.

ເມື່ອເທດສະໜາແລ້ວ, ພຣະອົງກໍສັ່ງບອກຊີມອນວ່າ: ຈົ່ງພາຍອອກກາງວັງແລ້ວຕີກມອງເອົາປາເຖີດ. ຊີມອນທູນຕອບວ່າ: ພຣະອາຈານເອີຍ! ພວກຂ້ານ້ອຍໄດ້ທຳງານອິດອອ່ນຕະຫລອດຄືນແລ້ວແຕ່ບໍ່ໄດ້ຫຍັງ ຫາກເມື່ອພຣະອາຈານສັ່ງຂ້ານ້ອຍກໍຈະເອົາມອງລົງ. ແລະເມື່ອເອົາມອງລົງແລ້ວກໍຖືກປາມາກຫລາຍຈົນມອງຂາດ. ພວກເຂົາຈຶ່ງກວັກມືເອີ້ນໝູ່ຊາວປະມົງທີ່ຢູ່ເຮືອອີກລຳໜຶ່ງມາຊ່ວຍ. ພວກນັ້ນກໍໄດ້ພາກັນມາ ແລະຂົນປາຂຶ້ນໃສ່ເຕັມເຮືອທັງສອງລຳຈົນວ່າເກືອບຈະຫລົ້ມ.

ເຫັນດັ່ງນັ້ນ, ຊີມອນເປໂຕຈຶ່ງຂາບລົງແທບພຣະບາດຂອງພຣະເຢຊູເຈົ້າທູນວ່າ: ພຣະອົງເອີຍ! ເຊີນໜີຈາກຂ້ານ້ອຍເຖີດ ຍ້ອນຂ້ານ້ອຍແມ່ນຄົນບາບ. ຍ້ອນວ່າຊີມອນແລະພວກທີ່ຢູ່ກັບເຂົາເຫັນປາຖືກມອງຫລາຍກໍພາກັນງຶດຢ່າງໃຫຍ່. ຢາໂກເບ, ຢວງບຸດຂອງເຊເບເດທີ່ເປັນໝູ່ຂອງຊີມອນກໍມີຄວາມຢ້ານກົວດ້ວຍ.

ພຣະເຢຊູເຈົ້າຈຶ່ງກ່າວກັບຊີມອນວ່າ: ຢ່າຢ້ານເລີຍ! ແຕ່ນີ້ໄປເຈົ້າຈະໄຫລມອງຈັບເອົາຄົນ. ແລະເມື່ອພາຍເຮືອມາເຖິງຝັ່ງແລ້ວ ພວກເຂົາກໍພາກັນປະຖິ້ມທຸກຢ່າງແລ້ວຕິດຕາມພຣະເຢຊູເຈົ້າໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນວັນອາທິດນີ້ກ່າວເຖິງປະສົບການແຫ່ງການພົບພໍ້ກັບພຣະເຈົ້າແລະການເປັນຜູ້ປະກາດເຖິງຂ່າວດີຂອງພຣະອົງ.ບໍ່ວ່າຈະເປັນປະພາສົກອີຊາຢາໃນບົດອ່ານທີໜຶ່ງກໍຄືຊີມອນເປໂຕໃນພຣະວໍລະສານກໍລ້ວນແຕ່ໄດ້ພົບພໍ້ພຣະຈົ້າແລະກາຍເປັນຜູ້ປະກາດເຖິງພຣະອົງ.

ໃນບົດອ່ານທີໜຶ່ງ, ປະພາສົກອີຊາຢາໄດ້ພົບພໍ້ພຣະເຈົ້າໃນນິລະມິດຢູ່ໃນພຣະວິຫານ. ພຣະອົງຊົງປະທັບນັ່ງບົນພະບັນລັງແລະເສື້ອຕຸ້ມຂອງພຣະອົງຍາວປົກຄຸມພຣະວິຫານ. ພຣະບັນລັງເປັນເຄື່ອງໝາຍບົ່ງບອກເຖິງກະສັດຜູ້ປົກຄອງ. ສ່ວນເສື້ອຕຸ້ມຍາວນັ້ນບົ່ງບອກເຖິງຄວາມຮຸ່ງເຮືອງແລະສິນຸງຄຸນຂອງກະສັດ. ໝາຍວ່າປະພາສົກອີຊາຢາໄດ້ເຫັນພຣະເຈົ້າຜູ້ເປັນກະສັດແລະສິນຸງຄຸນຂອງພຣະອົງແຜ່ຂະຫຍາຍໄປທົ່ວທຸກບ່ອນ. ຕໍ່ໜ້າເຫດການດັ່ງກ່າວ, ປະພາສົກອີຊາຢາກໍຮູ້ສຶກວ່າຕົນເປັນຄົນບາບ. ຍ້ອນປາກສົບຂອງຕົນເປື້ອນໝອງແລະປະຊາກອນຂອງທ່ານກໍມີປາກສົບເປື້ອນໝອງດ້ວຍ. ໝາຍວ່າ, ແຕ່ກ່ອນປະພາສົກອີຊາຢາແລະປະຊາກອນຂອງທ່ານໄດ້ກ່າວສິ່ງໃດໜຶ່ງທີ່ຜິດຕໍ່ພຣະທຳບັນຍັດຂອງພຣະເຈົ້າ. ຫລືພວກເຂົາອາດຈະເຊື່ອແລະນົບໄຫວ້ພຣະເທັດທຽມອັນເປັນມົນທິນທີ່ເປື້ອນໝອງ. ແຕ່ດຽວນີ້ປະພາສົກອີຊາຢາໄດ້ຮັບການຊຳລະຈາກຖ່ານໄຟອັນຮ້ອນຮົນທີ່ມາຈາກພຣະແທ່ນອັນເປັນເຄື່ອງໝາຍແຫ່ງຄວາມສັກສິດຂອງພຣະເຈົ້າ. ດ້ວຍເຫດນີ້, ປະພາສົກອີຊາຢາຈຶ່ງສາມາດຕອບຕໍ່ສຽງຮຽກເອີ້ນຂອງພຣະເຈົ້າໄດ້ໂດຍກ່າວວ່າ: “ຂ້າພະເຈົ້າພ້ອມແລ້ວ, ໂຜດສົ່ງຂ້າພະເຈົ້າໄປເຖີດ”.

ສ່ວນໃນພຣະວໍລະສານ, ຊີມອນເປໂຕຜູ້ເປັນຊາວປະມົງໄດ້ອິດເມື່ອຍຕະຫລອດຄືນໂດຍບໍ່ໄດ້ປາຈັກໂຕ. ແຕ່ເມື່ອທ່ານພົບກັບພຣະເຢຊູເຈົ້າແລະເຊື່ອໃນວາຈາຂອງພຣະອົງ, ຊີມອນເປໂຕກໍໄດ້ພາຍເຮືອງອອກກາງວັງແລະຕົກມອງຕາມທີ່ພຣະເຢຊູເຈົ້າສັ່ງບອກ. ແລະຜົນທີ່ຕາມມາກໍຄື ປາຕິດມອງຢ່າງຫລວງຫລາຍຈົນມອງເກືອບຈະຂາດ. ການພົບພໍ້ກັບພຣະເຢຊູເຈົ້າທຳໃຫ້ສະພາບການແລະຊີວິດຂອງຊີມອນເປໂຕປ່ຽນໄປ. ແຕ່ກ່ອນເຂົາເປັນຊາວປະມົງແລະຄົນບາບ, ດຽວນີ້, ເຂົາເປັນສິດຂອງພຣະເຢຊູເຈົ້າແລະເປັນປະມົງຈັບຄົນ.

ສ່ວນພວກເຮົາເດ, ພວກເຮົາໄດ້ພົບພໍ້ກັບພຣະເຢຊູເຈົ້າໃນຊີວິດຂອງພວກເຮົາບໍ? ແລະເມື່ອໄດ້ພົບກັບພຣະອົງແລ້ວ, ຊີວິດຂອງພວກເຮົາໄດ້ມີການປ່ຽນແປງບໍ? ພວກເຮົາໄດ້ກາຍເປັນຜູ້ປະກາດເຖິງພຣະອົງບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດໃຫ້ລູກໄດ້ພົບພໍ້ພຣະອົງໃນພຣະວາຈາແລະໃນສິນມະຫາສະໜິດຊຶ່ງລູກໄດ້ຮັບໃນພິທີບູຊາມິຊຊາ. ເພື່ອລູກຈະໄດ້ຮູ້ຈັກພຣະອົງຍິ່ງຂຶ້ນແລະສາມາດປະກາດເຖິງພຣະອົງຜູ້ເປັນພຣະເຈົ້າແລະພຣະຜູ້ໄຖ່ຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ